ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 62 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 07.04.2008.

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 04/ສພຊ, ລົງວັນທີ 03 ກໍລະກົດ 2007;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການກະຊວງສຶກສາທິການ ສະບັບເລກທີ 152/ສສ. ຈ໓08 ລົງວັນທີ 14 ກຸມພາ 2008;
- ອີງຕາມ ການສະເໜີຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 33/ທປຄ, ລົງວັນທີ 03 ເມສາ 2008.

ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີການເຮັດວຽກຂອງກະຊວງສຶກສາທິການ ເພື່ອເປັນບ່ອນອີງໃນດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາການສຶກສາແຫ່ງຊາດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງສຶກສາທິການ ຊຶ່ງມີຕົວອັກສອນຫຍໍ້ "ສສ" ແມ່ນອົງການບໍລິຫານແຫ່ງລັດຂັ້ນສູນກາງ ໃນໂຄງປະກອບກົງຈັກຂອງລັດຖະບານ, ມີພາລະບົດບາດ ໃນການຄຸ້ມຄອງມະຫາພາກວຽກງານການສຶກສາໃນຂອບເຂດທົ່ວປະເທດ ແນໃສ່ພັດທະນາຊັບພະຍາກອນມະນຸດ, ສ້າງຄົນໃຫ້ກາຍເປັນພົນລະເມືອງດີ, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີວິຊາຊີບ ແລະ ຄວາມຊຳນານງານ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ກະຊວງສຶກສາທິການ ມີຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຂອງການຄຸ້ມຄອງລັດ ຕາມກົດໝາຍວ່າດ້ວຍລັດຖະບານ, ກົດໝາຍອື່ນໆ ກ່ຽວກັບຂະແໜງການສຶກສາ ແລະ ຍັງມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ເປັນແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບກົດໝາຍກ່ຽວກັບການພັດທະນາການສຶກສາ ເພື່ອສະເໜີໃຫ້ລັດຖະບານພິຈາລະນາ; ພ້ອມທັງຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດບັນດາແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ແລະ ກົດໝາຍທີ່ໄດ້ຮັບອະນຸມັດ ໃຫ້ບັນລຸຜົນສຳເລັດຕາມວັດຖຸປະສົງ ແລະ ຄາດໝາຍ ທີ່ໄດ້ກຳນົດ ;
2. ສ້າງ, ປັບປຸງຮ່າງກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາໃຫ້ສອດຄ່ອງກັບສະພາບໃນແຕ່ລະໄລຍະ ເພື່ອນຳສະເໜີ ໃຫ້ລັດຖະບານພິຈາລະນາ;
3. ໂຄສະນາເຜີຍແຜ່ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນງານ, ໂຄງການພັດທະນາການສຶກສາ, ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບການສຶກສາ, ປຸກລະດົມຂົນຂວາຍທົ່ວສັງຄົມ ເພື່ອປະກອບສ່ວນເຂົ້າໃນການພັດທະນາການສຶກສາ;
4. ຄົ້ນຄວ້າ, ວິເຄາະວິໄຈ, ວາງແຜນພັດທະນາວຽກງານການສຶກສາກ່ອນໄວຮຽນ, ສາມັນສຶກສາ, ສ້າງຄູ, ອາຊີວະສຶກສາ, ການສຶກສາຊັ້ນສູງ, ການສຶກສາພາກເອກະຊົນ, ພະລະສຶກສາ ແລະ ສິລະປະສຶກສາ, ການສຶກສາຊົນເຜົ່າ, ແມ່ຍິງ, ຄົນພິການ, ການສຶກສານອກໂຮງຮຽນ ແລະ ວຽກງານ ອື່ນໆ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງກະຊວງສຶກສາທິການ;
5. ຄົ້ນຄວ້າສ້າງແຜນພັດທະນາຊັບພະຍາກອນມະນຸດ ເພື່ອຕອບສະໜອງແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ - ສັງຄົມຂອງລັດຖະບານ;
6. ວາງແຜນ ກໍ່ສ້າງ, ບຳລຸງ, ສັບຊ້ອນ, ກຳນົດຕຳແໜ່ງງານ, ປະຕິບັດນະໂຍບາຍ ຕໍ່ພະນັກງານ ແລະ ປັບປຸງບູລະນະກົງຈັກການຈັດຕັ້ງ, ການບໍລິຫານ ແລະ ການຄຸ້ມຄອງການສຶກສາໃນຂອບເຂດທົ່ວປະເທດ ທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງສຶກສາທິການ;
7. ຄຸ້ມຄອງທາງດ້ານວິຊາການຕໍ່ການສຶກສາກ່ອນໄວຮຽນ, ສາມັນສຶກສາ ແລະ ອາຊີວະສຶກສາຂັ້ນຕົ້ນ, ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາເອກະຊົນໃນທົ່ວປະເທດ;

8. ຄຸ້ມຄອງບັນດາມະຫາວິທະຍາໄລໃນລະດັບມະຫາພາກ, ຄຸ້ມຄອງໂດຍກົງສະຖາບັນສ້າງຄູ, ໂຮງຮຽນອາຊີວະສຶກສາ, ໂຮງຮຽນສາມັນກິນນອນຊົນເຜົ່າ, ສູນ ແລະ ສະຖາບັນການສຶກສາລະດັບຕ່າງໆທີ່ຮັບໃຊ້ຫລາຍແຂວງ;
9. ສົມທົບກັບກະຊວງອື່ນໆ ເພື່ອຄຸ້ມຄອງດ້ານວິຊາການ ແລະ ລະບຽບຫຼັກການ ກ່ຽວກັບການສຶກສາຕໍ່ໂຮງ ຮຽນ, ສະຖາບັນ, ມະຫາວິທະຍາໄລ ທີ່ຂຶ້ນກັບຂະແໜງການອື່ນ;
10. ຄົ້ນຄວ້າສ້າງ, ພັດທະນາ ແລະ ຮັບຮອງຫຼັກສູດການສຶກສາ ທຸກຊັ້ນ, ທຸກຂັ້ນ ແລະ ທຸກຮູບແບບໃນລະບົບການສຶກສາແຫ່ງຊາດ;
11. ຊີ້ນຳ, ສ້າງແຜນງົບປະມານ ແລະ ພ້ອມທັງຈັດສັນ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ກວດສອບການຈັດຕັ້ງປະຕິບັດງົບປະມານ- ການເງິນ, ການບັນຊີ, ຊັບສິນ ແລະ ການຈັດຊື້ສິ່ງຂອງຂະແໜງການສຶກສາ;
12. ກຳນົດມາດຕະຖານຂອງລະບົບໂຮງຮຽນ ແລະ ການອອກແບບຂອງອາຄານ, ສະຖານທີ່ ແລະ ອຸປະກອນຕ່າງໆ ເພື່ອຮັບໃຊ້ການຮຽນ-ການສອນ;
13. ສ້າງລະບົບຮັບປະກັນ ແລະ ກວດກາຄຸນນະພາບການສຶກສາໃນໂຮງຮຽນ ທຸກຊັ້ນ ແລະ ທຸກສາຍໂດຍສະເພາະໂຮງຮຽນສາຍສາມັນສຶກສາ;
14. ຊີ້ນຳ, ນຳພາການຈັດຕັ້ງປະຕິບັດ, ກວດກາ, ປະເມີນຜົນ, ສະຫລຸບ ແລະ ຖອດຖອນບົດຮຽນ ໃນການປະຕິບັດ ແຜນການ, ແຜນງານ, ໂຄງການພັດທະນາການສຶກສາໃນແຕ່ລະໄລຍະ ແລະ ລາຍງານໃຫ້ລັດຖະບານ, ຄະນະປະຈຳສະພາແຫ່ງຊາດ;
15. ພິຈາລະນາອະນຸມັດພິມຈຳໜ່າຍປຶ້ມຕຳລາຮຽນ ແລະ ເອກະສານຕ່າງໆ ທີ່ພົວພັນເຖິງການສຶກສາ;
16. ກຳນົດລະບຽບການສອບເສັງເລື່ອນຊັ້ນ, ສອບເສັງຈົບຊັ້ນ ແລະ ການສອບເສັງເຂົ້າໂຮງຮຽນ ແລະ ສະຖາບັນການສຶກສາລະດັບຕ່າງໆ;
17. ພົວພັນ, ຮ່ວມມື, ຂົນຂວາຍແຫຼ່ງທຶນ ແລະ ແລກປ່ຽນບົດຮຽນກັບຕ່າງປະເທດ, ອົງການຈັດຕັ້ງສາກົນ, ການຈັດຕັ້ງອື່ນໆ ເພື່ອພັດທະນາການສຶກສາ ;
18. ຊ່ວຍອົງການພຸດທະສາສະໜາສຳພັນລາວ ໃນການຄຸ້ມຄອງການສຶກສາສົງ,ໂຮງຮຽນສົງ ແລະ ວິທະຍາໄລສົງ;
19. ຄຸ້ມຄອງ ແລະ ສົ່ງເສີມກອງທຶນສະຫວັດດີການຄູແຫ່ງຊາດໃຫ້ໝັ້ນຄົງ ແລະ ຂະຫຍາຍຕົວ;
20. ປະຕິບັດໜ້າທີ່ ອື່ນໆ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ**

ກະຊວງສຶກສາທິການ ມີຂອບເຂດສິດໃນການຄຸ້ມຄອງລັດ ຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ ລາວ, ກົດໝາຍອື່ນໆ ກ່ຽວກັບຂະແໜງການສຶກສາ ແລະ ຍັງມີສິດ ດັ່ງນີ້:

1. ສະເໜີໃຫ້ລັດຖະບານປັບປຸງ, ສ້າງ ຫຼື ຍົກເລີກບັນດາກົດໝາຍ, ລັດຖະບັນຍັດ, ດຳລັດ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຂັ້ນເທິງກ່ຽວກັບວຽກງານສຶກສາ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການຕ່າງໆ ເພື່ອຄຸ້ມຄອງຂະແໜງການສຶກສາ ຕາມລະບຽບກົດໝາຍ;
3. ສັ່ງໂຈະ, ງົດການປະຕິບັດ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການຂອງອົງການຈັດຕັ້ງຂັ້ນລຸ່ມ ທີ່ຂຶ້ນກັບຕົນ ແລະ ສະເໜີ ໃຫ້ລັດຖະບານປັບປຸງ, ງົດການປະຕິບັດ ຫຼື ຍົກເລີກການ

ປະຕິບັດນິຕິກຳຂອງ ຂະແໜງການອື່ນ ຫຼື ຂອງອົງການປົກຄອງທ້ອງຖິ່ນ ທີ່ຂັດກັບລະບຽບກົດໝາຍຂອງຂະແໜງການສຶກສາ;

4. ເຊັນສັນຍາ ແລະ ອະນຸສັນຍາ ກ່ຽວກັບວຽກງານສຶກສາກັບຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ຕາມການມອບໝາຍຂອງລັດຖະບານ, ສະເໜີໃຫ້ລັດຖະບານຍົກເລີກສັນຍາ ແລະ ອະນຸສັນຍາ ກ່ຽວກັບ ວຽກສຶກສາກັບຕ່າງປະເທດທີ່ຂັດກັບແນວທາງການສຶກສາຂອງພັກແລະກົດໝາຍວ່າດ້ວຍການສຶກສາແຫ່ງ ສ.ປ.ປ.ລາວ;
5. ສະເໜີ ໃຫ້ລັດຖະບານພິຈາລະນາກ່ຽວກັບມາດຕະການປ້ອງກັນ ແລະ ຕອບໂຕ້ການກະທຳທີ່ໃສ່ຮ້າຍປ້າຍສີແນວທາງນະໂຍບາຍການສຶກສາ ເພື່ອຜົນປະໂຫຍດຂອງປະເທດຊາດ;
6. ສະເໜີ ຫຼື ແຕ່ງຕັ້ງ, ສັບຊ້ອນ, ໂຍກຍ້າຍ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ ທີ່ຂຶ້ນກັບສິດໃນການຄຸ້ມຄອງຂອງຕົນ ຕາມລະບຽບກົດໝາຍ;
7. ສະເໜີ ຫຼື ສ້າງຕັ້ງ ຫຼື ຍຸບເລີກກົງຈັກຊ່ວຍວຽກ, ຫົວໜ່ວຍການຜະລິດ, ໂຮງຮຽນ, ສູນ, ສະຖາບັນການສຶກສາລະດັບຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕາມລະບຽບກົດໝາຍ;
8. ຊຸກຍູ້, ຕິດຕາມ, ກວດກາການນຳໃຊ້ຊັບສິນ, ວັດຖຸອຸປະກອນຕ່າງໆ ແລະ ການປະຕິບັດລາຍຮັບລາຍຈ່າຍ ງົບປະມານການເງິນ, ການບັນຊີຂອງຂະແໜງການສຶກສາຕາມລະບຽບຫຼັກການ;
9. ອະນຸມັດການນຳໃຊ້ແບບອາຄານ, ສະຖານທີ່ຮຽນ ແລະ ເຄື່ອງເຟີນິເຈີຂອງຂະແໜງການສຶກສາ;
10. ອະນຸມັດໃຫ້ພົນລະເມືອງລາວໄປສຶກສາຕໍ່ຢູ່ຕ່າງປະເທດ ແລະອະນຸມັດໃຫ້ຄົນຕ່າງປະເທດມາສຶກສາ ຢູ່ ສ.ປ.ປ.ລາວ;
11. ກວດກາ-ກວດການວຽກງານສຶກສາຂັ້ນສູນກາງ, ທ້ອງຖິ່ນ, ນິຕິບຸກຄົນ, ບຸກຄົນກ່ຽວກັບການປະຕິບັດລະບຽບກົດໝາຍ ແລະ ນິຕິກຳອື່ນໆທາງດ້ານການສຶກສາ;
12. ຮຽກປະຊຸມຜູ້ບໍລິຫານ ແລະ ຄຸ້ມຄອງການສຶກສາທຸກຂັ້ນຂອງຂະແໜງການສຶກສາ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນເພື່ອປຶກສາຫາລື ວຽກງານພັດທະນາການສຶກສາແຫ່ງຊາດ;
13. ອະນຸມັດ ຫຼື ຍົກເລີກການນຳໃຊ້ຫຼັກສູດ ແລະ ການອອກປະກາສະນີຍະບັດຂອງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາຂັ້ນຕ່າງໆຂອງຂະແໜງການສຶກສາ ແລະ ຂະແໜງການອື່ນ ນັບທັງພາກລັດ ແລະ ເອກະຊົນຕາມລະບຽບການ;
14. ຕິດຕາມ ແລະແນະນຳຜູ້ຮັບຜິດຊອບວຽກງານສຶກສາທີ່ປະຈຳສະຖານທູດລາວຢູ່ຕ່າງປະເທດໃນການປະຕິບັດ ໜ້າທີ່ການຄຸ້ມຄອງນັກຮຽນ, ນັກສຶກສາ ແລະ ນັກຄົ້ນຄວ້າຂອງລາວ;
15. ສະເໜີການເກັບຄ່າທຳນຽມ ແລະ ຄ່າບໍລິການ ການສຶກສາ;
16. ປະຕິບັດສິດອື່ນໆ ທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງຂະແໜງການສຶກສາ ປະກອບດ້ວຍຂັ້ນສູນກາງ ແລະ ທ້ອງຖິ່ນ ດັ່ງນີ້:

**ກ. ກົງຈັກຊ່ວຍວຽກການຄຸ້ມຄອງມະຫາພາກ ປະກອບມີ:**

1. ຫ້ອງການກະຊວງ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມແຜນການ ແລະ ການຮ່ວມມື;
4. ກົມການເງິນ;
5. ກົມກວດກາ;
6. ກົມປະຖົມ ແລະ ອະນຸບານ ສຶກສາ;
7. ກົມມັດທະຍົມສຶກສາ;
8. ກົມສ້າງຄູ;
9. ກົມອາຊີວະສຶກສາ;
10. ກົມການສຶກສາຊັ້ນສູງ;
11. ກົມການສຶກສານອກໂຮງຮຽນ;
12. ກົມຄຸ້ມຄອງການສຶກສາພາກເອກະຊົນ;
13. ກົມພະລະ ແລະ ສິລະປະສຶກສາ;
14. ຫ້ອງການຄະນະກຳມາທິການແຫ່ງຊາດລາວ ເພື່ອຢູແນດສະໂກ;
15. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ນອກຈາກນີ້, ຍັງມີບັນດາສູນ, ສະຖາບັນການສຶກສາ ແລະ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງ ທີ່ຂຶ້ນກັບກະຊວງສຶກສາທິການ.

**ຂ. ກົງຈັກການຈັດຕັ້ງບໍລິຫານການສຶກສາຂັ້ນທ້ອງຖິ່ນ ປະກອບມີ:**

1. ພະແນກສຶກສາ ຂັ້ນແຂວງ;
2. ຫ້ອງການສຶກສາ ຂັ້ນເມືອງ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

1. ກະຊວງສຶກສາທິການ ປະກອບມີ: ລັດຖະມົນຕີວ່າການ ເປັນຫົວໜ້າກະຊວງ, ເປັນສະມາຊິກຂອງຄະນະ ລັດຖະບານ, ມີຄວາມຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງ, ອຳນວຍຄວບຄຸມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ ໂດຍສະເພາະກົດໝາຍວ່າດ້ວຍການສຶກສາ, ມີຄວາມຮັບຜິດຊອບໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ.ລາວ ແລະ ຕາມດຳລັດສະບັບນີ້, ຮັບຜິດຊອບໂດຍກົງຕໍ່ລັດຖະບານ ແລະນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການເຄື່ອນໄຫວວຽກງານຂອງຂະແໜງການສຶກສາ;
2. ກະຊວງສຶກສາທິການປະກອບມີ: ລັດຖະມົນຕີຊ່ວຍວ່າການ ຈຳນວນໜຶ່ງ ຊຶ່ງເປັນຜູ້ຊ່ວຍວຽກຂອງລັດຖະມົນຕີວ່າການ ແລະ ລົງເລິກຮັບຜິດຊອບກຸ່ມວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີວ່າການ;

3. ກະຊວງສຶກສາທິການ ປະກອບມີ: ຫົວໜ້າ ແລະ ຮອງຫົວໜ້າຫ້ອງການກະຊວງ, ຫົວໜ້າກົມ ແລະ ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າອົງການຫຽບເທົ່າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງຫ້ອງການ, ກົມ ແລະ ອົງການທຽບເທົ່າກົມ, ພະນັກງານວິຊາການ ແລະ ພະນັກງານບໍລິຫານຮັບໃຊ້ ຈຳນວນໜຶ່ງ ຊຶ່ງບັນຈຸເຂົ້າໃນຕຳແໜ່ງງານຕ່າງໆ.
4. ຢູ່ຂັ້ນທ້ອງຖິ່ນປະກອບມີ: ຫົວໜ້າ ແລະ ຮອງຫົວໜ້າພະແນກສຶກສາປະຈຳແຂວງ, ນະຄອນ; ຫົວໜ້າ ແລະ ຮອງ ຫົວໜ້າຫ້ອງການສຶກສາປະຈຳເມືອງ, ເທດສະບານ; ພະນັກງານວິຊາການ ແລະ ບໍລິຫານຮັບໃຊ້ຂອງຂະແໜງການສຶກສາ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ກະຊວງສຶກສາທິການເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:**

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ - ລັດຖະກອນປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ພັດທະນາຂະແໜງການສຶກສາ;
2. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີການກຳນົດ ຫຼື ແກ້ໄຂວຽກງານຢ່າງມີຈຸດສຸມ, ໃຈກາງ ແລະ ເປົ້າໝາຍ ໃນແຕ່ລະໄລຍະ;
3. ບໍລິຫານ ແລະ ຄຸ້ມຄອງຂະແໜງການຕາມສາຍຕັ້ງ ໂດຍຕິດພັນກັບທ້ອງຖິ່ນຮາກຖານ ແລະ ປະສານສົມທົບຢ່າງແໜ້ນແຟ້ນກັບຄະນະພັກ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນໆ ແນໃສ່ໝູນໃຊ້ກຳລັງແຮງສັງລວມຂອງທຸກພາກສ່ວນ ເພື່ອພັດທະນາການສຶກສາ;
4. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫລຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍໃນແຕ່ລະໄລຍະ;
5. ປະຕິບັດລະບອບປະຊຸມ, ລາຍງານສ່ອງແສງຢ່າງເຂັ້ມງວດ ແລະ ລາຍງານໃຫ້ລັດຖະບານເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ**

ກະຊວງສຶກສາທິການ ມີງົບປະມານ ແລະ ກາປະທັບຂອງຕົນ ເພື່ອຮັບໃຊ້ວຽກງານລັດຖະການ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການກະຊວງສຶກສາທິການ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງບັນດາກົມ, ອົງການທຽບເທົ່າກົມ, ພະແນກຕ່າງໆຂຶ້ນກັບກົມ, ທຽບເທົ່າກົມ; ພະແນກສຶກສາແຂວງ, ນະຄອນ ແລະ ຫ້ອງການສຶກສາເມືອງ, ເທດສະບານ; ໂຮງຮຽນ, ສູນ ແລະ ສະຖາບັນ ແລະ ມະຫາວິທະຍາໄລຕ່າງໆ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ກະຊວງສຶກສາທິການ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ, ເມືອງ, ເທດສະບານ, ໂຮງຮຽນ, ສູນ, ສະຖາບັນການສຶກສາຕ່າງໆຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ສະບັບເລກທີ 167/ນຍ ລົງວັນທີ 9 ກັນຍາ1999, ທຸກຂໍ້ຕົກລົງ ແລະເອກະສານຕ່າງໆ ທີ່ປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ**

**ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ບົວສອນ ບຸບຜາວັນ